ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມບັນຊີ

ເລກທີ /ກບຊ

ນະຄອນຫຼວງວຽງຈັນ, ວັນທີ ພຶດສະພາ 2017

# ໃບອະນຸຍາດ

## ນຳໃຊ້ຊຸດຄຳສັ່ງໂປຣແກຣມບັນຊີ ຂອງອົງການຈັດຕັ້ງລັດ (ຊົ່ວຄາວ)

- ອີງຕາມ ກົດໝາຍວ່າດ້ວຍ ການບັນຊີ ສະບັບເລກທີ 47/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ຄຳແນະນຳຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການບັນຊີ ເລກທີ 531/ກງ, ລົງວັນທີ 26 ກຸມພາ 2016;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງການເງິນ ວ່າດ້ວຍ ການຮັບຮອງປຶ້ມຄູ່ມືການບັນຊີ ຂອງອົງການຈັດຕັ້ງລັດ ສະບັບເລກທີ 900/ກງ, ລົງວັນທີ 31 ພຶດສະພາ 2015;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງການເງິນ ສະບັບເລກທີ 2586/ກງ, ລົງວັນທີ 03 ສິງຫາ 2015 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມບັນຊີ.

ກົມບັນຊີ ກະຊວງການເງິນ ອອກໃບອະນຸຍາດ:

ມາດຕາ 1 ໃຫ້ມະຫາວິທະຍາໄລແຫ່ງຊາດ ນຳໃຊ້ຊຸດຄຳສັ່ງໂປຣແກຣມບັນຊີຂອງອົງການຈັດຕັ້ງລັດ ຊົ່ວຄາວ ເພື່ອຮັບໃຊ້ສະເພາະວຽກງານຄຸ້ມຄອງການບັນຊີຂອງຕົນ ເນື່ອງຈາກວ່າ ເປັນປີເລີ່ມຕົ້ນໃນການທົດລອງຈັດຕັ້ງປະຕິບັດບັນຊີຄູ່ຂອງອົງການຈັດຕັ້ງລັດ ແລະ ບໍ່ອະນຸຍາດໃຫ້ຈຳໜ່າຍ ຫຼື ນຳໃຊ້ຢູ່ອົງການຈັດຕັ້ງອື່ນຢ່າງເດັດຂາດ.

ມາດຕາ 2 ໃບອະນຸຍາດສະບັບນີ້ ນຳໃຊ້ໄດ້ເຖິງວັນທີ **31 ທັນວາ 2017**, ພາຍຫຼັງໝົດກຳນົດ ຕ້ອງໄດ້ຂໍອະນຸຍາດສືບຕໍ່ນຳໃຊ້ເປັນແຕ່ລະປີ.

ມາດຕາ 3 ຖ້າຫາກມີການດັດແກ້ ຫຼື ປັບປຸງ ໂປຣແກຣມບັນຊີດັ່ງກ່າວ ມະຫາວິທະຍາໄລແຫ່ງຊາດ ຕ້ອງໄດ້ນຳສະເໜີກົມບັນຊີ ກະຊວງການເງິນ ເພື່ອກວດກາຄວາມຖືກຕ້ອງຄືນໃໝ່ ຕາມກົດໝາຍວ່າດ້ວຍ ການບັນຊີ.

ມາດຕາ 4 ໃບອະນຸຍາດສະບັບນີ້ ມີຜົນສັກສິດໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າກົມ

ຈັນທະລີ ເສນາພັ